ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23
ກັນຍາ
2026
ປີທີ 15
ສະບັບທີ 1082

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນສິງຫາ



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນສິງຫາ 2026 ໄດ້ດຳເນີນຂຶ້ນໃນລະຫວ່າງວັນທີ 3-4 ກັນຍານີ້ ໂດຍການເປັນປະທານຂອງທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮັກສາການປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະ

ອ່ານຕໍ່ໜ້າ 6



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ໜ້າທີ່ພື້ນຖານຂອງທົ່ວພັກ ທີ່ມີຄວາມໝາຍຕັດສິນກວ່າໝູ່ໃນປັດຈຸບັນນີ້ ແມ່ນຕ້ອງເພີ່ມທະວີການສ້າງພັກໃຫ້ແໜ້ນແກ່ນເຂັ້ມແຂງໃນທຸກດ້ານຄື: ດ້ານການເມືອງແນວຄິດ ແລະ ການຈັດຕັ້ງ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 158)

ອ່ານຕໍ່ສະບັບໜ້າ

## ພິທີມອບ-ຮັບເງິນຊ່ວຍເຫຼືອໄພພິບັດນ້ຳຖ້ວມ




(ສພຊ) - ວັນທີ 03 ກັນຍານີ້ ທີ່ສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບເງິນ 200 ລ້ານກີບ ເພື່ອຊ່ວຍເຫຼືອໄພພິບັດນ້ຳຖ້ວມຢູ່ບັນດາແຂວງທີ່ຖືກຜົນກະທົບ, ຕາງໜ້າຮັບໂດຍທ່ານນາງ ສູນທອນ ໄຊຍະຈັກ ຮັກສາການແທນປະທານສະພາແຫ່ງຊາດ ແລະ ຕາງໜ້າມອບໂດຍທ່ານ ກົວ ກຸຍໄຫ (GUO GUIHAI) ຜູ້ອຳນວຍການບໍລິສັດ ກຸ່ມອາຣ໌ແອວ (ລາວ) ບໍ່ແຮ່ ຈຳກັດຜູ້ດຽວເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ໂອກາດນີ້, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ມອບໃບຍ້ອງຍໍຂອງປະທານຄະນະປະຈຳສະພາແຫ່ງຊາດ ໃຫ້ບໍລິສັດດັ່ງກ່າວ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນຄັ້ງນີ້ ເພື່ອເປັນການສັນລະເສີນຜົນງານ ແລະ ຄຸນງາມຄວາມດີ ຢ່າງສົມກຽດ.

## ອັດຕະປືປິດການຊົດເຊີຍລາຍການທີ 6ແກ່ຜູ້ປະສົບໄພເຂື່ອນເຊປຽນ-ເຊນ້ຳນ້ອຍ, ຕິດຕາມກວດກາ ແລະ ແກ້ໄຂຜົນກະທົບເຫດການອ່າງເກັບນ້ຳບໍລິສັດ 15 ອິງສາ




(ສພຊ) - ວັນທີ 3 ກັນຍາ 2026 ທີ່ຫ້ອງວ່າການເມືອງສະໜາມໄຊ ແຂວງອັດຕະປື ໄດ້ຈັດພິທີມອບ-ຮັບ ແລະ ປິດການຊົດເຊີຍລາຍການທີ6ເປັນລາຍການສຸດທ້າຍ ໃຫ້ແກ່ປະຊາຊົນຜູ້ປະສົບໄພພິບັດຈາກເຫດການສັນເຂື່ອນໄຟຟ້າເຊປຽນ-ເຊນ້ຳນ້ອຍແຕກ ໃນວັນທີ 23 ກໍລະກົດ 2018, ໂດຍການເຂົ້າຮ່ວມຂອງທ່ານ ບຸນເຖິງ ດວງສະຫວັນ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ບັນດາການນຳຂັ້ນແຂວງ-ເມືອງ, ຕາງໜ້າບໍລິສັດ PNPC, ປະທານບ້ານ ແລະ ປະຊາຊົນຈາກ 6 ບ້ານ.

ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ກຳມະການພັກແຂວງ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ໄດ້ລາຍງານຜົນການຊ່ວຍເຫຼືອ, ການຊົດເຊີຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ເຊິ່ງຜ່ານ

ອ່ານຕໍ່ໜ້າ 5

## ປະກາດກົງຈັກ ແລະ ແຕ່ງຕັ້ງບຸກຄະລາກອນ ປະຈຳ 2 ເຂດເລືອກຕັ້ງພາກໃຕ້



ອ່ານຕໍ່ໜ້າ 8

## ກວດກາເນື້ອໃນຮ່າງກົດໝາຍ ນາຍທະຫານກອງທັບປະຊາຊົນລາວ

(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ) ໄດ້ຈັດຂຶ້ນລະຫວ່າງວັນທີ 31 ສິງຫາ ຫາ 1 ກັນຍາ

ອ່ານຕໍ່ໜ້າ 8




## ຮຽບຮຽງຮ່າງກົດໝາຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ



ອ່ານຕໍ່ໜ້າ 2

# ຮອງປະທານ ກວສຊ ເຄື່ອນໄຫວວຽກງານຢູ່ 3 ແຂວງພາກເໜືອ




(ສພຊ) - ລະຫວ່າງວັນທີ 23-30 ສິງຫາ 2026, ທ່ານກົລະກັນພົມມະວົງ ຮອງປະທານກຳມາທິການວັດທະນະທຳ-ສັງຄົມແລະຊົນເຜົ່າ (ກວສຊ) ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ມະຕິກອງປະຊຸມສະພາແຫ່ງຊາດ ໂດຍສະເພາະແມ່ນບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ຢູ່ແຂວງອຸດົມໄຊ, ແຂວງຫຼວງພະບາງ ແລະ ແຂວງໄຊຍະບູລີ ໂດຍມີບັນດາທ່ານຄະນະປະຈຳ ແລະ ກຳມະການພັກແຂວງ, ພະແນກການ-ຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ການເຄື່ອນໄຫວຄັ້ງນີ້ ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ຈາກພະແນກການທີ່ກ່ຽວຂ້ອງ, ເຂົ້າຢ້ຽມຂໍ່ານັບການນຳຂອງແຂວງ, ຢ້ຽມຢາມບໍລິສັດ ລາວຟີນິກ ພັດທະນາກະສິກຳ ກຳຈັດ ຢູ່ບ້ານໃໝ່ແລະຢ້ຽມຢາມສູນພັດທະນາສີມືແຮງງານ ແຂວງອຸດົມໄຊ; ຢ້ຽມຢາມຫໍພິພິທະພັນແຫ່ງຊາດຫຼວງພະບາງ, ພົບປະເຮັດວຽກຮ່ວມກັບພະແນກວັດທະນະທຳ ແລະການທ່ອງທ່ຽວແຂວງ ໂດຍໄດ້ຮັບຟັງລາຍງານສະພາບການຄຸ້ມຄອງ, ບໍລິຫານການທ່ອງທ່ຽວ ແລະ ຂໍ້ສະເໜີຕ່າງໆ ຈາກຜູ້ປະກອບການໂຮງແຮມ, ເຮືອນພັກ, ຮ້ານອາຫານ, ສະຖານທີ່ທ່ອງທ່ຽວ ແລະ ຕົວແທນສະມາຄົມທຸລະກິດຢູ່ແຂວງຫຼວງພະບາງ; ຢ້ຽມຢາມໂຮງໝໍແຂວງໄຊຍະບູລີ, ສູນອະນຸລັກແລະເພາະພັນຊ້າງອາຊີ (ພູແຄນ) ແລະ ເຄື່ອນໄຫວຕິດຕາມກວດກາຢູ່ເມືອງໄຊສະຖານ ແຂວງໄຊຍະບູລີ.

**(ຂ່າວ-ພາບ: ກວສຊ)**

# ສສຊ ເຂົ້າຮ່ວມກອງປະຊຸມ G-CAP ປະຈຳປີ 2026




(ສພຊ) - ລະຫວ່າງວັນທີ 24-28 ສິງຫາ 2026, ທ່ານ ສາຍທອງ ພົມມະວົງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ11ແຂວງບໍລິຄຳໄຊ, ປະຈຳການຢູ່ກຳມາທິການເສດຖະກິດ ແລະ ການເງິນ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາຂອງສະຖາບັນເຝິກອົບຮົມຜູ້ນຳແຫ່ງການປ່ຽນແປງລະດັບໂລກສຳລັບສະມາຊິກລັດຖະສະພາ (G-CAP) ປະຈຳປີ 2026 ທີ່ນະຄອນຫຼວງອູລານບາຕໍ, ປະເທດມົງໂກລີ ເຊິ່ງມີບັນດາສະມາຊິກລັດຖະສະພາຈາກທົ່ວໂລກ ຈຳນວນ25 ປະເທດ ເຂົ້າຮ່ວມ.

ກອງປະຊຸມດຳເນີນໄປດ້ວຍບັນຍາກາດຟົດຟື້ນ ເຊິ່ງໄດ້ຮັບຟັງການບັນລະຍາຍຈາກບັນດາການນຳ, ຊ່ຽວຊານ ແລະ ອາຈານຜູ້ຊົງຄຸນວຸດທິຂອງມະຫາວິທະຍາໄລຕ່າງໆ. ພ້ອມນັ້ນ, ບັນດາສະມາຊິກລັດຖະສະພາຈາກປະເທດຕ່າງໆ ໄດ້ແລກປ່ຽນຄຳຄິດຄຳເຫັນ, ປະສົບການ ແລະ ການຈັດຕັ້ງປະຕິບັດທີ່ດີ ກ່ຽວກັບການແກ້ໄຂບັນຫາການເສື່ອມໂຊມຂອງດິນ, ການຟື້ນຟູດິນ, ການຄຸ້ມຄອງລະບົບການສະໜອງນ້ຳຊົນລະປະທານ, ການຕໍ່ຕ້ານໄພແຫ້ງແລ້ງ, ຄວາມໝັ້ນຄົງທາງດ້ານອາຫານ, ການອະນຸລັກຊີວະນານາພັນ, ການປ່ຽນແປງສະພາບດິນຟ້າອາກາດ, ການພັດທະນາແບບຍືນຍົງທີ່ລົງເລິກບັນດາຫົວຂໍ້ສົນທະນາຕົ້ນຕໍຄື: 1. ຫຼັກການຟື້ນຟູດິນ, ການເສີມສ້າງຄວາມໝັ້ນຄົງແຫ່ງຊາດໂດຍຜ່ານການນຳພາດ້ານການຟື້ນຟູດິນ; 2. ການຈັດການການເຊື່ອມໂຍງຂອງດິນ-ນ້ຳ; 3. ການອະນຸລັກຊີວະນານາພັນ; 4. ລະບົບທາດອາຫານ ແລະ ຄວາມອຸດົມສົມບູນຂອງດິນ; 5. ນິຕິບັນຍັດກ່ຽວກັບການຟື້ນຟູດິນ ແລະ ລະບົບນິເວດ; 6. ການສ້າງຄວາມເຂັ້ມແຂງພາວະຜູ້ນຳການຟື້ນຟູທີ່ດິນ; 7. ການທົບທວນນະໂຍບາຍ ແລະ ວາງແຜນການຈັດຕັ້ງປະຕິບັດຕົວຈິງຮ່ວມກັນ.

ຄະນະຜູ້ແທນຍັງໄດ້ມີໂອກາດເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ນຳ 17 (COP 17) ຂອງອົງການສະຫະປະຊາຊາດເພື່ອການພັດທະນາກ່ຽວກັບການຕໍ່ຕ້ານການຫັນເປັນທະເລຊາຍ ເຊິ່ງຈັດຂຶ້ນໃນໄລຍະດຽວກັນທີ່ນະຄອນຫຼວງອູລານບາຕໍ, ການສຳມະນາລັດຖະສະພາຂັ້ນສູງ ໃນການຊຸກຍູ້ການຜັນຂະຫຍາຍນະໂຍບາຍໄປສູ່ພາກປະຕິບັດຕົວຈິງ, ກອງປະຊຸມໂຕະມົນລັດຖະສະພາ ວ່າດ້ວຍຂໍ້ຕົກລົງ Rio ເພື່ອກະກຽມກອງປະຊຸມໃຫຍ່ຜູ້ນຳ ຄັ້ງທີ 31 (COP 31) ຂັ້ນປະທານປະເທດ ທີ່ຈະຈັດຂຶ້ນຢູ່ປະເທດຕວກກີ ໃນປີ 2027, ແລະ ເຄື່ອນໄຫວຢ້ຽມຢາມພາກສະໜາມຢູ່ອຸທິຍານແຫ່ງຊາດ ຮັດໄຊ ແລະ ຢ້ຽມຊົມລັດຖະສະພາຂອງປະເທດມົງໂກລີອີກດ້ວຍ.

ກອງປະຊຸມຄັ້ງນີ້ເປັນການປະກອບສ່ວນສຳຄັນໃນການແລກປ່ຽນທັດສະນະ, ບົດຮຽນ ແລະ ປະສົບການ ກັບບັນດາຜູ້ແທນລັດຖະສະພາໃນພາກພື້ນ ແລະ ສາກົນ ກ່ຽວກັບການຈັດຕັ້ງປະຕິບັດທີ່ດີທີ່ສຸດ ແລະ ບັນດາສິ່ງທ້າທາຍຕ່າງໆ ແລະ ຍັງເປັນເວທີທີ່ສຳຄັນໃນການຈັດຕັ້ງປະຕິບັດພາລະບົດບາດດ້ານນິຕິບັນຍັດ ແລະ ຊຸກຍູ້ການພັດທະນາຍຸດທະສາດໃໝ່ໆ ເພື່ອແກ້ໄຂບັນຫາທີ່ສຳຄັນ ເຊັ່ນ: ການຮັບມືກັບໄພແຫ້ງແລ້ງ, ການເສື່ອມໂຊມຂອງດິນ, ການຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ການພັດທະນາແບບຍືນຍົງ ເຊິ່ງຈະຊ່ວຍເສີມສ້າງການຮ່ວມມືລະຫວ່າງລັດຖະສະພາໃນການຂັບເຄື່ອນການພັດທະນາແບບຍືນຍົງ ແລະ ການຟື້ນຟູດິນໃນອະນາຄົດ.

## ຮຽບຮຽງ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 31 ສິງຫາ 2026 ທີ່ເມືອງແກ້ວອຸດົມແຂວງວຽງຈັນ, ກະຊວງປ້ອງກັນຄວາມສະຫງົບ (ປກສ) ຮ່ວມກັບກະຊວງຍຸຕິທຳ ໄດ້ຈັດກອງປະຊຸມປັບປຸງ ແລະ ຮຽບຮຽງຮ່າງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໂດຍການເປັນປະທານຮ່ວມຂອງ ພົຕ. ຄອນສະຫວັນ ສີມພາໄຊ ກຳມະການສູນກາງພັກ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ແລະ ທ່ານວິແກ້ວ ບຸບຜາວັນຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ມີຕາງໜ້າພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້, ກໍເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມກວດກາກຳລັງ ປກສ ເພື່ອເຮັດໃຫ້ກຳລັງດັ່ງກ່າວ ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ມີຄວາມຊຳນານທາງດ້ານວິຊາສະເພາະ, ມີແບບແຜນວິທີເຮັດວຽກທີ່ກ້າວໜ້າ ແລະ ທັນສະໄໝ ແນໃສ່ຮັບປະກັນເຮັດສຳເລັດໜ້າທີ່ໃນການປົກປັກຮັກສາສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການປົກປັກຮັກສາແລະສ້າງສາປະເທດຊາດ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍໃນບາງມາດຕາທີ່ເຫັນວ່າຍັງບໍ່ທັນສອດຄ່ອງ, ບໍ່ທັນຮັດກຸມ ແລະ ບໍ່ເໝາະສົມກັບສະພາບຄວາມເປັນຈິງ ເຊິ່ງຕ້ອງໄດ້ປັບປຸງໃຫ້ຖືກຕ້ອງ, ຮັດກຸມ, ຄົບຖ້ວນ ແລະ ແທດເໝາະກັບສະພາບຄວາມເປັນຈິງ.

ໂດຍປະຕິບັດຕາມແຜນການສ້າງແລະປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ, ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍຂອງກະຊວງປ້ອງກັນຄວາມສະຫງົບປີ2026-2030; ຄະນະຮັບຜິດຊອບໄດ້ດຳເນີນການຄົ້ນຄວ້າ, ປັບປຸງຫຼາຍຫຼົບຫຼາຍຕ່າວ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ ເຊິ່ງໄດ້ມີການປະເມີນຜົນ, ທາບທາມຄຳເຫັນ ທັງຢູ່ສູນກາງ, ທ້ອງຖິ່ນ ແລະ ສະເໜີຜ່ານຄະນະປະຈຳພັກກະຊວງປກສ ເພື່ອມີຄຳເຫັນ; ນອກຈາກນີ້, ຍັງໄດ້ຮ່ວມກັບກະຊວງຍຸຕິທຳ ຈັດກອງປະຊຸມກວດກາຄວາມສອດຄ່ອງທາງດ້ານກົດໝາຍຂັ້ນວິຊາການ ໃນຄັ້ງວັນທີ 11-12 ສິງຫາ ແລະ ກອງປະຊຸມປັບປຸງບາງພາກ, ບາງໝວດ ແລະ ບາງມາດຕາ ໃນຄັ້ງວັນທີ 21 ສິງຫາ ສຳເລັດໂດຍພື້ນຖານ.

**ຄັດ ແລະ ຮຽບຮຽງຈາກ**
**ເພຈ: ຄວາມສະຫງົບ**
**Lao Security News**

## ກອງປະຊຸມ ຄປຈສພຂ ຫຼວງນ້ຳທາ ປະຈຳເດືອນກໍລະກົດ




(ສພຂ) - ກອງປະຊຸມຄະນະປະຈຳຂອງສະພາປະຊາຊົນແຂວງຫຼວງນ້ຳທາ ປະຈຳເດືອນກໍລະກົດ 2026 ໄດ້ໄຂຂຶ້ນໃນຕອນແລງວັນທີ 28 ກໍລະກົດ ຜ່ານ ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງພາຍໃຕ້ການເປັນປະທານຂອງທ່ານ ຄຳກິ່ງ ຜຸຍຫຼ້າມະນີວົງ ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງແລະກອງເລຂາເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຮັບຟັງການລາຍງານການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງປະຈຳເດືອນມິຖຸນາ2026 ສະບັບເລກທີ 25/ຄປຈຂ, ລົງວັນທີ5 ມິຖຸນາ2026; ພິຈາລະນາ ໜັງສືສະເໜີຂອງຄະນະກຳມະການປົກຄອງແຂວງ ສະບັບເລກທີ 60/ຄປຂ, ລົງວັນທີ 9/6/2026 ກ່ຽວກັບການສະເໜີແຕ່ງຕັ້ງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ; ພິຈາລະນາ ໜັງສືສະເໜີຂອງສານປະຊາຊົນແຂວງ ສະບັບເລກທີ 203/ສປຊ.ຂ, ລົງວັນທີ 17/6/2026 ກ່ຽວກັບການສະເໜີຂໍເລື່ອນຊັ້ນຜູ້ພິພາກສາຊັ້ນ II ຂຶ້ນເປັນຜູ້ພິພາກສາຊັ້ນ III; ພິຈາລະນາ ໜັງສືສະເໜີ ຂອງສານປະຊາຊົນແຂວງ ສະບັບເລກທີ 204/ສປຊ.ຂ, ລົງວັນທີ 17/6/2026 ກ່ຽວກັບການສະເໜີຂໍເລື່ອນຊັ້ນຜູ້ພິພາກສາຊັ້ນ I ຂຶ້ນເປັນຜູ້ພິພາກສາຊັ້ນ II; ພິຈາລະນາ ແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 5 ປີ (2026-2030) ຂອງແຂວງຫຼວງນ້ຳທາ; ຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາການສະເໜີດັດແກ້ມູນຄ່າໂຄງການກໍ່ສ້າງໂຮງຮຽນ ມສ ສາມັກຄີ ສະບັບເລກທີ 121/ປສ, ລົງວັນທີ 22/8/2025; ພິຈາລະນາມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການປັບປຸງກົງການຈັດຕັ້ງພາຍໃນສະພາປະຊາຊົນແຂວງ; ພິຈາລະນາ ແຜນການລົງຊຸກຍູ້ຕິດຕາມກວດກາໂຄງການສ້ອມແປງ ເສັ້ນທາງຫຼວງແຫ່ງຊາດ ເລກທີ 13N, R3, 3A ຂອງຄະນະກຳມະການ ເສດຖະກິດ ແລະ ການເງິນ; ພິຈາລະນາ ໜັງສືສະເໜີຂອງກອງບັນຊາການທະຫານແຂວງ ແລະ ຄົ້ນຄວ້າບັນຫາສຳຄັນອື່ນໆ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ, ວຽກງານປິ່ນອ້ອມພາຍໃນສະພາປະຊາຊົນແຂວງ.

**(ວັນນີ ແຝງບົວວັນ)**

## ສະພາປະຊາຊົນແຂວງລາຍເຈົ່າ ຢ້ຽມຢາມແຂວງອຸດົມໄຊ



(ສພຂ) - ວັນທີ 27 ກໍລະກົດຜ່ານມາ ໄດ້ມີພິທີພົບປະສອງຝ່າຍ ລະຫວ່າງ ຄະນະຜູ້ແທນສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ກັບ ຄະນະຜູ້ແທນສະພາປະຊາຊົນແຂວງລາຍເຈົາ; ຝ່າຍລາວນຳໂດຍສະຫາຍ ນາງ ຄຳໝັ້ນ ແກ້ວບຸນຫວນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງພ້ອມດ້ວຍຄະນະ ແລະ ຝ່າຍຫວຽດນາມນຳໂດຍສະຫາຍ ນາງ ເຕິນ ທິເກວ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງລາຍເຈົາ ພ້ອມຄະນະ.

ໃນພິທີສອງຝ່າຍໄດ້ລາຍງານສະພາບລວມການເຄື່ອນໄຫວວຽກງານຂອງກັນ ແລະ ກັນຊາບ ທັງທົບທວນຄືນການຮ່ວມມືໃນໄລຍະຜ່ານມາ ເພື່ອສືບຕໍ່ກຳນົດທິດທາງໃນການເພີ່ມທະວີສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີພິເສດແລະການຮ່ວມມືຮອບດ້ານ ລະຫວ່າງ 2 ປະເທດ ລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະ ລະຫວ່າງແຂວງອຸດົມໄຊແລະແຂວງລາຍເຈົາ ໃນຕໍ່ໜ້າໃຫ້ດີຂຶ້ນເລື້ອຍໆ; ຈາກນັ້ນ, ໄດ້ມີສິນທະນາແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ.

ວັນດຽວກັນ, ທີ່ຫ້ອງຮັບແຂກຫ້ອງວ່າການແຂວງອຸດົມໄຊ, ສະຫາຍ ນາງ ເຕິນ ທິເກວ ກຳມະການປະຈຳພັກແຂວງ,ຮອງປະທານສະພາປະຊາຊົນແຂວງລາຍເຈົາ ຍັງໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ບຸນຄົງ ຫຼ້າຈຽມພອນ ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງອຸດົມໄຊ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ແຂວງອຸດົມໄຊ ຕື່ມອີກ.

**(ແສງພອນ ອິນນະລົງ)**

## ສພຂ ຫຼວງພະບາງ - ລາຍເຈົ່າ ພົບປະສອງຝ່າຍ



(ສພຂ) - ວັນທີ 24 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມໃຫຍ່ສະພາປະຊາຊົນແຂວງ (ສພຂ) ຫຼວງພະບາງ ໄດ້ມີການພົບປະສອງຝ່າຍລະຫວ່າງຄະນະຜູ້ແທນ ສພຂ ຫຼວງພະບາງ ກັບ ຄະນະຜູ້ແທນ ສພຂ ລາຍເຈົ່າ ສສ.ຫວຽດນາມ ຝ່າຍລາວນຳໂດຍສະຫາຍ ສຳນານ ສິນທະນີ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ພ້ອມຄະນະແລະຝ່າຍສສ. ຫວຽດນາມ ນຳໂດຍສະຫາຍ ນາງ ເຕິນ ທິເກວ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງລາຍເຈົາ ພ້ອມຄະນະ.

ໃນການພົບປະສອງຝ່າຍໄດ້ລາຍງານສະພາບລວມການເຄື່ອນໄຫວວຽກງານ ຂອງ ກັນ ແລະ ກັນຊາບ; ຈາກນັ້ນ, ໄດ້ສົນທະນາແລກປ່ຽນບົດຮຽນແລະພ້ອມກັນຄົ້ນຄວ້າທິດທາງແຜນການຮ່ວມມືໃນຕໍ່ໜ້າ ເຊິ່ງໄດ້ເຫັນດີເປັນເອກະພາບສ້າງບົດບັນທຶກການຮ່ວມມື(MOU)ລະຫວ່າງ ສພຂ ຫຼວງພະບາງ ກັບ ສພຂ ລາຍເຈົາ ໃນໄລຍະໃໝ່ທີ່ມີແຜນການຮ່ວມມືຢ່າງເປັນຮູບປະທຳ; ໃຫ້ມີການພົບປະແລກປ່ຽນຂອງຄະນະຜູ້ແທນສອງຝ່າຍ ສພຂ ຫຼວງພະບາງ ສພຂ ລາຍເຈົາ ປີລະຄັ້ງ ໂດຍພັດປ່ຽນກັນເປັນເຈົ້າພາບ; ສືບຕໍ່ຊຸກຍູ້ສາຍພົວພັນຮ່ວມມືແລະແລກປ່ຽນບົດຮຽນ, ປະສົບການ ຂອງວຽກງານສະພາ ໂດຍສະເພາະແມ່ນການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ, ການໂຄສະນາຂົນຂວາຍໃຫ້ປະຊາຊົນເຂົ້າໃຈກົດໝາຍ ແລະ ແນວທາງຂອງພັກ; ສະໜັບສະໜູນທຶນເຝິກອົບຮົມທາງດ້ານວິຊາການໃນຫົວຂໍ້ສະເພາະກ່ຽວກັບວຽກງານສະພາປະຊາຊົນແຂວງ ໃຫ້ກັບພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ.

ພ້ອມນັ້ນ, ສະຫາຍ ນາງ ເຕິນ ທິເກວ ຍັງໄດ້ຢ້ຽມຂ່ຳນັບສະຫາຍ ບຸນເລື່ອມ ມະນີວົງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງຫຼວງພະບາງ ເພື່ອລາຍງານຈຸດປະສົງຂອງການເດີນທາງມາຢ້ຽມຢາມແລະເຮັດວຽກຢູ່ແຂວງຫຼວງພະບາງຄັ້ງນີ້.

**(ວິລິຍະ ວັນນະສີ)**



# ປະກາດພະນັກງານນຳພາ-ຄຸ້ມຄອງ ອອກພັກການ-ຮັບອຸດໜູນບຳນານ




(ສພຂ) - ວັນທີ 27 ກໍລະກົດຜ່ານມາ ທີ່ສະໂມສອນຫ້ອງວ່າການແຂວງ, ສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ໄດ້ຈັດພິທີປະກາດພະນັກງານນຳພາ-ຄຸ້ມຄອງ ອອກພັກການ-ຮັບອຸດໜູນບຳນານ ໂດຍການເປັນປະທານຂອງທ່ານ ເພັງບິລັນ ຄຳພັນເພັງ ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີກຳມະການຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ກຳມະການຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ, ອົງການ, ກົມກອງ, ປະທານ-ຮອງປະທານຄະນະກຳມະການ, ຄະນະຫ້ອງວ່າການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ວິຊາການພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ທ່ານ ພອນສະຫວັນ ໄຊສົມພັນກຳມະການຄະນະປະຈຳພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ ໄດ້ຜ່ານມະຕິຕົກລົງ ຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ຂໍ້ຕົກລົງ ຂອງຄະນະກຳມະການປົກຄອງແຂວງໄຊຍະບູລີ ວ່າດ້ວຍການອະນຸມັດໃຫ້ພະນັກງານ-ລັດຖະກອນ ອອກພັກການ-ຮັບອຸດໜູນບຳນານ ໂດຍມີພະນັກງານນຳພາ-ຄຸ້ມຄອງທີ່ໄດ້ຮັບອະນຸມັດອອກຮັບອຸດໜູນບຳນານ 4 ທ່ານ ຄື: ທ່ານ ບຸນລ້ອມ ຊົມສີຫາປັນຍາກຳມະການພັກແຂວງ, ຮອງປະທານ ສພຂ ຊຸດທີ IV; ທ່ານ ຈັດຕະວາ ແກ້ວຄຳເພັດ ປະທານຄະນະກຳມະການເສດຖະກິດ, ແຜນການ-ການເງິນ ສພຂ ຊຸດທີ IV; ທ່ານ ບຸນໄທ ສີເທບ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສພຂ ຊຸດທີ IV ແລະ ທ່ານ ນາງ ທອງແຖວ ສີແສງທອງ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ-ການເງິນ ສພຂ ຊຸດທີ IV.

ທ່ານ ເພັງບິລັນ ຄຳພັນເພັງ ໄດ້ມອບຂໍ້ຕົກລົງແກ່ບັນດາທ່ານທີ່ອອກພັກການ-ຮັບອຸດໜູນບຳນານ ທັງສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຂອບໃຈຢ່າງສຸດຊຶ້ງ ຕໍ່ຜົນງານ, ຄຸນງາມຄວາມດີ, ຄວາມທຸ່ມເທເຫື່ອແຮງ ແລະ ສະຕິປັນຍາ ປະກອບສ່ວນເຂົ້າໃນການຊີ້ນຳ-ນຳພາ ແລະ ປະຕິບັດໜ້າທີ່ການເມືອງຮັບໃຊ້ອົງການຈັດຕັ້ງພັກ-ລັດ ແລະ ປະຊາຊົນບັນດາເຜົ່າ ຕະຫຼອດໄລຍະຜ່ານມາ.

**(ສພຂ ໄຊຍະບູລີ)**

# ບໍລິຈາກເລືອດ ສະຫຼອງວັນລັດຖະທຳມະນູນ




(ສພຂ) -ວັນທີ 14 ສິງຫາ 2026 ສະພາປະຊາຊົນແຂວງ ຮ່ວມກັບ ສູນເລືອດອົງການກາແດງແຂວງບໍລິຄຳໄຊ ຈັດກິດຈະກຳຮັບບໍລິຈາກເລືອດແບບສະໝັກໃຈບໍ່ຫວັງສິ່ງຕອບແທນຂຶ້ນ ຢູ່ທີ່ສະໂມສອນແຂວງບໍລິຄຳໄຊ ພາຍໃຕ້ຄຳຂວັນ "ໜຶ່ງຍອດເລືອດເພື່ອມະນຸດສະທຳ ໃຫ້ເລືອດໃຫ້ຊີວິດ" ໂດຍການເປັນປະທານຮ່ວມຂອງທ່ານ ເລື່ອນວິໄລ ຈັນທະລາພັນ ຮອງເລຂາຄະນະບໍລິຫານງານພັກແຂວງແລະທ່ານ ໄຊອຳພອນ ສີຫາວົງ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງເຂົ້າຮ່ວມມີທ່ານ ຄຳປຸ່ນ ສີຫາລາດ ປະທານຄະນະກຳມະການເສດຖະກິດ ແລະ ການເງິນ, ຫົວໜ້າອະນຸກຳມະການກິລາ-ຂະບວນການ ແລະ ລະດົມທຶນ ວັນລັດຖະທຳມະນູນແຫ່ງຊາດ, ທ່ານ ນາງ ນິດຕາ ເພັງສະຫວັດ ຮອງຫົວໜ້າອົງການກາແດງແຂວງ, ພ້ອມດ້ວຍທີມງານວິຊາການແພດຂອງຂະແໜງສູນເລືອດອົງການກາແດງແຂວງ ເຊິ່ງມີຜູ້ສະໝັກໃຈບໍລິຈາກເລືອດຈຳນວນ 5 ຖົງ, ຍິງ 3 ຖົງ.

ໃນການຈັດກິດຈະກຳຄັ້ງນີ້, ຈຸດປະສົງກໍແມ່ນເພື່ອສ້າງຂະບວນການຊົມເຊີຍສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດຄົບຮອບ 35 ປີ ການບໍລິຈາກເລືອດຍັງເປັນການແກ້ໄຂການຂາດແຄນເລືອດແລະຕອບສະໜອງເລືອດໃຫ້ພຽງພໍເພື່ອນຳໃຊ້ເຂົ້າໃນການປິ່ນປົວຄົນເຈັບທີ່ນອນຢູ່ຕາມໂຮງໝໍແຫ່ງຕ່າງໆໃນຂອບເຂດທົ່ວປະເທດ.

# ຄະນະນຳ ສພຂ ຢ້ຽມຢາມ ແລະ ຕິດຕາມ ສະພາບໄພພິບັດນ້ຳຖ້ວມຢູ່ເມືອງຄູນຄຳ




(ສພຂ) - ໃນວັນທີ 8 ສິງຫາ 2026, ທ່ານ ປອ. ແກ້ວອຸດອນ ບຸດສິງຂອນ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ສພຊ) ປະຈຳເຂດເລືອກຕັ້ງທີ 12, ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ຮ່ວມກັບຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ເຄື່ອນໄຫວຢ້ຽມຢາມແລະຕິດຕາມສະພາບໄພພິບັດ ນ້ຳຖ້ວມ ຢູ່ເມືອງຄູນຄຳ ໂດຍມີທ່ານ ຄຳປຽນ ມະນີຄຳ ເລຂາຄະນະບໍລິຫານງານພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງຄູນຄຳ, ພະແນກການກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ພ້ອມດ້ວຍຄະນະຕິດຕາມ.

ໃນການເຄື່ອນໄຫວຄັ້ງນີ້, ທ່ານ ນາງ ຍິມມະລາ ເດດສັກດາ ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ລາຍງານໃຫ້ຮູ້ວ່າ: ເມືອງຄູນຄຳ ເປັນເມືອງໜຶ່ງທີ່ໄດ້ຮັບຜົນກະທົບຈາກໄພພິບັດນ້ຳຖ້ວມທາງທຳມະຊາດ ໃນໄລຍະຜ່ານມາ 2 ຄັ້ງຄື: ເລີ່ມແຕ່ວັນທີ 7-17 ກໍລະກົດ 2026 ໄດ້ຮັບຜົນກະທົບຈາກພະຍຸໄມ້ສັກ ແລະ ພະຍຸບາວີ ເຮັດໃຫ້ຝົນຕົກໜັກຕິດຕໍ່ກັນຫຼາຍວັນເຮັດໃຫ້ເກີດນ້ຳຖ້ວມບ້ານເຮືອນປະຊາຊົນຈຳນວນ 9 ບ້ານ (ນາກາງ, ບ້ານແກ້ງ, ມ່ວງນ້ຳສາງ, ນາຄຳ, ອໍ້, ໂພນແຍງ, ກຸບ, ຄູນມະນີ ແລະ ກອງລໍ; ມີຄອບຄົວໄດ້ຮັບຜົນກະທົບຈຳນວນ 1,365 ຄອບຄົວ ແລະ ຖ້ວມສະເພາະເນື້ອທີ່ນາປີ, ເນື້ອທີ່ສວນ ຈຳນວນ 18 ບ້ານ, ເນື້ອທີ່ປັກດຳ 3,639 ເຮັກຕາ, ນ້ຳຖ້ວມ 3,234 ເຮັກຕາ, ເສຍຫາຍ 1,769 ເຮັກຕາ, ນ້ຳຖ້ວມເສັ້ນທາງ ແລະ ທີ່ເປ່ເພເສຍຫາຍທັງໝົດ 8 ເສັ້ນ; ຄັ້ງທີ2: ເມືອງຄູນຄຳ ໄດ້ຮັບອິດທິພົນຄວາມກົດອາກາດຕ່ຳ ເຮັດໃຫ້ຝົນຕົກຕິດຕໍ່ກັນແຕ່ວັນທີ5-7 ສິງຫາ 2026 ເຮັດໃຫ້ມີນ້ຳຖ້ວມ ຈຳນວນ 8 ບ້ານ: ໂພນແຍງ, ນາກາງ, ນາຄຳ, ມ່ວງນ້ຳສາງ, ຄູນມະນີ, ອໍ້ ແລະ ບ້ານແກ້ງ ມີຄອບຄົວທີ່ໄດ້ຮັບຜົນກະທົບ 713 ຄອບຄົວ, ຖ້ວມເນື້ອທີ່ທຳການຜະລິດຂອງປະຊາຊົນ ຈຳນວນ 17 ບ້ານ, ເນື້ອທີ່ທຳການຜະລິດທັງໝົດ 3,401 ເຮັກຕາ, ຖືກນ້ຳຖ້ວມ 1,186 ເຮັກຕາແລະດິນເຊາະເຈື່ອນທາງເລກ 8A ເຂດພູຜາມ່ານ, ຜູ້ໂຮທີ່ໄດ້ຮັບການເປ່ເພ.

ຕໍ່ກັບສະພາບການດັ່ງກ່າວ, ທ່ານ ປອ. ແກ້ວອຸດອນ ບຸດສິງຂອນ ໃນນາມຄະນະນຳຂອງສະພາປະຊາຊົນແຂວງ ໄດ້ສະແດງຄວາມເປັນຫ່ວງເປັນໃຍຕໍ່ກັບຄອບຄົວທີ່ໄດ້ຮັບຜົນກະທົບໃນຄັ້ງນີ້, ພ້ອມທັງຮຽກຮ້ອງໃຫ້ອຳນາດການປົກຄອງເມືອງ ກໍຄືຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ຈົ່ງພ້ອມກັນຕິດຕາມເຝົ້າລະວັງຢ່າງໃກ້ສິດເພື່ອລາຍງານ ແລະ ກຽມພ້ອມຮັບມືໃຫ້ທັນສະພາບການ. ຫຼັງຈາກນັ້ນ, ກໍໄດ້ສືບຕໍ່ເຄື່ອນໄຫວຕິດຕາມສະພາບນ້ຳຖ້ວມເສັ້ນທາງຢູ່ບາງຈຸດຂອງເມືອງຄູນຄຳຄື: ເຂດບ້ານນາຂາມຫາບ້ານຄູນມະນີ, ບ້ານນາເມືອງຫາບ້ານນາກາງ, ເສັ້ນທາງເຂົ້າກອງບັນຊາການທະຫານເມືອງ.

ໂອກາດເຄື່ອນໄຫວຄັ້ງນີ້, ຄະນະ ໄດ້ມອບເຄື່ອງບໍລິໂພກ-ອຸປະໂພກ ພ້ອມທັງເງິນສົດ ຈຳນວນ 50 ລ້ານກີບ ມອບໃຫ້ຄະນະນຳຂອງເມືອງ ເພື່ອນຳໄປຊ່ວຍເຫຼືອແກ້ໄຂສຸກເສີນ ແລະ ຍັງໄດ້ມອບເງິນໃຫ້ກອງບັນຊາການທະຫານເມືອງຄູນຄຳ ຈຳນວນ 5 ລ້ານກີບ ເພື່ອປະກອບສ່ວນເຂົ້າໃນການສ້າງຂົວໄມ້ສຸກເສີນເຂົ້າໄປຫາກອງບັນຊາການທະຫານເມືອງຄູນຄຳ.

# ກວສຊ ສະຫຼຸບການເຄື່ອນໄຫວ 6 ເດືອນຕົ້ນປີ




(ສພຂ) - ວັນທີ 7 ສິງຫາຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ໄດ້ສະຫຼຸບການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ 2026 ພາຍໃຕ້ການເປັນປະທານຮ່ວມຂອງທ່ານສີສະຫວາດ ເພັງທະລັງສີ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງແລະທ່ານ ສີທາ ສິງວິໄລ ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະຊົນເຜົ່າ ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະກຳມະການ, ຕາງໜ້າຈາກພະແນກສຶກສາທິການ ແລະ ກິລາແຂວງ, ພະແນກສາທາລະນະສຸກແຂວງ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ວັດທະນະທຳແລະການທ່ອງທ່ຽວແຂວງ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພະນັກງານວິຊາການ ຂອງຂະແໜງການກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານບາງດ້ານທີ່ພົ້ນເດັ່ນ ໃນໄລຍະ 6 ເດືອນຕົ້ນປີ ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ; ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມເປັນຕົ້ນ: ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດຄາດໝາຍຂອງພະແນກ-ອົງການລັດທຽບເທົ່າພະແນກຂັ້ນແຂວງ ກ່ຽວກັບການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານປະຈຳ 6 ເດືອນຕົ້ນປີ ແລະ ການກຳນົດທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2026 ໂດຍສະເພາະແມ່ນການປະຕິບັດບັນດາຕົວເລກຄາດໝາຍທີ່ມະຕິກອງປະຊຸມສະພາປະຊາຊົນແຂວງ ໄດ້ພິຈາລະນາຮັບຮອງເອົາ, ທີ່ຍັງບໍ່ສາມາດປະຕິບັດໄດ້ ແລະ ເປັນສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດຜ່ານມາ, ຄວນຈະມີມາດຕະການ ຫຼື ຈຸດສຸມແນວໃດເພື່ອຊ່ວຍໃຫ້ພະແນກ-ອົງການທຽບເທົ່າພະແນກຂັ້ນແຂວງ ຊອກຫາວິທີການແກ້ໄຂບັນຫາດັ່ງກ່າວໃຫ້ນັບມື້ດີຂຶ້ນ ໂດຍສະເພາະການປະຕິບັດ 12 ຄາດໝາຍ ໃນຂົງເຂດສຶກສາທິການ ແລະ ກິລາ; 14 ຄາດໝາຍ ໃນຂົງເຂດສາທາລະນະສຸກ, ຕິດພັນວຽກງານການຄຸ້ມຄອງການປະຕິບັດນະໂຍບາຍກອງທຶນປະກັນສຸຂະພາບ, ການບໍລິການຂອງແພດໝໍ ໃນແຕ່ລະບ່ອນ; 6 ຄາດໝາຍ ໃນຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ;5ຄາດໝາຍໃນຂົງເຂດວັດທະນະທຳ ແລະ ການທ່ອງທ່ຽວ; ນອກນັ້ນ, ການຄຸ້ມຄອງ ແລະ ຕິດຕາມກວດກາຮ້ານກິນດື່ມ,ຮ້ານບັນເທີງ(ພັບຕ່າງໆ) ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມປະກອບຄຳຄິດຄຳເຫັນ ແລກປ່ຽນເຊິ່ງກັນ ແລະ ກັນ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ສະຫຼຸບຕີລາຄາ ແລະ ມີທິດຊີ້ນຳເພື່ອໃຫ້ກອງປະຊຸມໃນຄັ້ງນີ້ນຳໄປຈັດຕັ້ງປະຕິບັດໃຫ້ເກີດຜົນປະໂຫຍດສູງສຸດ.






## ອັດຕະປື...

(ຕໍ່ຈາກໜ້າ 1)

ມາໄດ້ຊ່ວຍເຫຼືອຜູ້ປະສົບໄພ 231 ຄົນ, ມອບເຮືອນພັກຖາວອນ 811 ຫຼັງ, ຟື້ນຟູທາງ 18 ເສັ້ນ ຄວາມຍາວ 27 ກິໂລແມັດ, ກໍ່ສ້າງຊົນລະປະທານ 4 ແຫ່ງ ສາມາດສະໜອງນ້ຳໃຫ້ແກ່ເນື້ອທີ່ການຜະລິດ 1,070 ເຮັກຕາ(ຮຕ)ພ້ອມທັງຟື້ນຟູໂຮງຮຽນ, ໂຮງໝໍຊຸມຊົນ, ໄຟຟ້າ, ຕະຫຼາດ ແລະ ໂຄງລ່າງອື່ນໆ; ນອກຈາກນີ້, ໄດ້ຈັດສັນດິນຜະລິດເນື້ອທີ່ 2,125 ຮຕ, ໃນນັ້ນ 1,474 ຮຕ ຈັດສັນໃຫ້ 811 ຄອບຄົວ ແລະ ຟື້ນຟູດິນນາເດີມ 2,263 ຮຕ ພ້ອມສະໜອງກົນຈັກກະສິກຳ ມູນຄ່າກວ່າ 4.8 ຕື້ກີບ. ຈາກຜົນການຟື້ນຟູເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນໂດຍພື້ນຖານ.

ສຳລັບການຊົດເຊີຍລາຍການທີ 6 ເຊິ່ງເປັນລາຍການສຸດທ້າຍ, ບໍລິສັດ PNPC ໄດ້ມອບເງິນຊົດເຊີຍຈຳນວນ 10 ລ້ານໂດລາ ໂດຍມີລາຍລະອຽດດັ່ງນີ້:

ບ້ານໃໝ່:ຄົວເຮືອນທີ່ໄດ້ຮັບຜົນກະທົບ 166 ຄົວເຮືອນ ມີມູນຄ່າຊົດເຊີຍທັງໝົດ 32,260,297,897 ກີບ;

ບ້ານທ່າຫີນ: ຄົວເຮືອນທີ່ເຫັນດີຮັບຮອງເອົາມູນຄ່າໃບຄິດໄລ່ ແລະ ເງື່ອນໄຂການຮ້ອງຂໍ 184 ຄົວເຮືອນ ມີມູນຄ່າຊົດເຊີຍທັງໝົດ 16,573,578,678 ກີບ;

ບ້ານຫີນລາດ: 154 ຄົວເຮືອນ ມີມູນຄ່າຊົດເຊີຍທັງໝົດ 16,418,051,865 ກີບ;

ບ້ານທ່າແສງຈັນ:ຄົວເຮືອນທີ່ເຫັນດີຮັບຮອງເອົາມູນຄ່າໃບຄິດໄລ່ ແລະ ເງື່ອນໄຂການຮ້ອງຂໍ 103 ຄົວເຮືອນມີມູນຄ່າຊົດເຊີຍທັງໝົດ8,152,691,037 ກີບ;

ບ້ານສະໜອງໃຕ້: 75 ຄົວເຮືອນ ມີມູນຄ່າຊົດເຊີຍທັງໝົດ 13,931,129,580 ກີບ;

ບ້ານແທ (ຄຸ້ມໂຄກກ່ອງ): 225 ຄົວເຮືອນ ມີມູນຄ່າຊົດເຊີຍທັງໝົດ 13,095,359,853 ກີບ;

ບ້ານຕະມໍຢອດ: ຄົວເຮືອນທີ່ເຫັນດີຮັບຮອງເອົາມູນຄ່າໃບຄິດໄລ່ ແລະ ເງື່ອນໄຂການຮ້ອງຂໍ 61 ຄົວເຮືອນ ມີມູນຄ່າຊົດເຊີຍທັງໝົດ 2,246,731,342 ກີບ.

ລວມທັງໝົດ 6 ບ້ານ 1 ຄຸ້ມ ມີຈຳນວນ 968 ຄົວເຮືອນ ທີ່ໄດ້ຮັບການຮັບຮອງຂໍ້ມູນສຸດທ້າຍ ໃນມູນຄ່າລວມທັງໝົດ 102,677,840,252 ກີບ ເທົ່າກັບ 100% ໃນນັ້ນ ມີ 5 ຄົວເຮືອນ ມີມູນຄ່າຊົດເຊີຍທັງໝົດ 766,644,005 ກີບ ເທົ່າກັບ 0.51%, ປັດຈຸບັນກຳລັງຂຸ້ນຂ້ຽວກວດກາຄວາມພ້ອມດ້ານຕ່າງໆໃນການໂອນເງິນ ຈຳນວນດັ່ງກ່າວເຂົ້າບັນຊີຂອງປະຊາຊົນໃຫ້ສຳເລັດພາຍໃນເດືອນກັນຍານີ້; ໂອກາດນີ້, ແຂວງອັດຕະປື ໄດ້ອອກໜັງສືຢືນຢັນການຊຳລະຄົບຖ້ວນ ພ້ອມທັງລົງນາມໃນບົດທຶກມອບ-ຮັບຢ່າງເປັນທາງການ ໂດຍຕາງໜ້າຈາກທັງສອງຝ່າຍ.

ທ່ານ ບຸນເຖິງ ດວງສະຫວັນ ຢ້ຳວ່າ: ການຊົດເຊີຍລາຍການທີ 6 ຄັ້ງນີ້ ມີຄວາມໝາຍສຳຄັນໃນການສະຫຼຸບ ແລະ ປິດຂະບວນການຊົດເຊີຍ ພ້ອມທັງຈະສືບຕໍ່ເອົາໃຈໃສ່ຟື້ນຟູຊີວິດ ແລະ ສ້າງຄວາມເປັນຢູ່ທີ່ດີໃຫ້ແກ່ປະຊາຊົນຜູ້ປະສົບໄພຕໍ່ໄປ.

ໃນວັນດຽວກັນ,ທ່ານ ບຸນເຖິງດວງສະຫວັນພ້ອມດ້ວຍຂະແໜງການກ່ຽວຂ້ອງຂອງແຂວງ-ເມືອງ ໄດ້ລົງພື້ນທີ່ຫ້ວຍສະໜອງເຂດເມືອງສະໜາມໄຊເພື່ອຕິດຕາມກວດກາ ແລະ ຮັບຟັງລາຍງານສະພາບຜົນກະທົບຕໍ່ປະຊາຊົນຈາກກໍລະນີນ້ຳໄຫຼຜ່ານຫ້ວຍສະໜອງມີປະລິມານຫຼາຍກວ່າປົກກະຕິ; ທັງນີ້, ກໍເພື່ອກວດກາສະພາບ,ຮັບຟັງລາຍງານຈາກທ້ອງຖິ່ນ ແລະ ສອບຖາມຂໍ້ມູນຈາກຄອບຄົວທີ່ໄດ້ຮັບຜົນກະທົບຕົວຈິງ.

ທ່ານ ຄຳໂພໄຊ ໄຊຍະເສນາ ເລຂາພັກເມືອງສະໜາມໄຊ ໄດ້ລາຍງານເບື້ອງຕົ້ນວ່າ: ເຫດການດັ່ງກ່າວເກີດຂຶ້ນໃນວັນທີ 19 ສິງຫາຜ່ານມາ ໄດ້ມີນ້ຳໄຫຼຜ່ານຫ້ວຍສະໜອງໃນປະລິມານຫຼາຍ ສົ່ງຜົນໃຫ້ປະຊາຊົນທີ່ອາໄສຢູ່ຕາມເຂດດັ່ງກ່າວໄດ້ຮັບຜົນກະທົບ; ຈາກການກວດກາແລະສຳຫຼວດໃນເບື້ອງຕົ້ນພົບວ່າ ມີຄອບຄົວປະຊາຊົນຈຳນວນໜຶ່ງທີ່ໄດ້ຮັບຜົນກະທົບຈາກເຫດການຄູກັນນ້ຳຂອງບໍລິສັດ 15 ອົງສາ ສວນກ້ວຍ, ຜົນກະທົບດັ່ງກ່າວໄດ້ສ້າງຄວາມເສຍຫາຍທາງດ້ານຊັບສິນຂອງປະຊາຊົນ ແລະ ຈຳເປັນຕ້ອງມີການກວດກາລາຍລະອຽດດ້ານຄວາມເສຍຫາຍຕໍ່ໄປ.

ການລົງພື້ນທີ່ຂອງຄະນະນຳແຂວງໃນຄັ້ງນີ້ ມີຈຸດປະສົງສຳຄັນໃນການກວດກາສະພາບຕົວຈິງ, ຮັບຟັງບັນຫາແລະຄວາມຕ້ອງການຂອງປະຊາຊົນ ພ້ອມທັງຊີ້ນຳໃຫ້ພາກສ່ວນກ່ຽວຂ້ອງ ຮ່ວມກັນກວດສອບຫາສາເຫດ ແລະ ປະເມີນຄວາມເສຍຫາຍຢ່າງຮອບດ້ານ; ພ້ອມນີ້, ຍັງໄດ້ເນັ້ນໃຫ້ພາກສ່ວນກ່ຽວຂ້ອງປະສານສົມທົບກັນຢ່າງໃກ້ຊິດໃນການຮັບຜິດຊອບ ແລະ ແກ້ໄຂຜົນກະທົບທີ່ເກີດຂຶ້ນ ໂດຍຄຳນຶງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນເປັນສຳຄັນ. ສຳລັບຂັ້ນຕໍ່ໄປ, ພາກສ່ວນກ່ຽວຂ້ອງຈະສືບຕໍ່ກວດກາແລະລວບລວມຂໍ້ມູນຄວາມເສຍຫາຍຂອງແຕ່ລະຄອບຄົວ ເພື່ອນຳໄປພິຈາລະນາຫາມາດຕະການຊ່ວຍເຫຼືອ, ຊົດເຊີຍ ແລະ ແກ້ໄຂຕາມຄວາມເໝາະສົມແລະຕາມລະບຽບການ.

ການລົງຕິດຕາມກວດກາຄັ້ງນີ້ ສະແດງໃຫ້ເຫັນເຖິງການໃສ່ໃຈຂອງຄະນະນຳແຂວງ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ພ້ອມທັງຊອກຫາແນວທາງແກ້ໄຂຢ່າງທັນການ ເພື່ອບັນເທົາຜົນກະທົບ ແລະ ສ້າງຄວາມອຸ່ນໃຈໃຫ້ແກ່ຄອບຄົວປະຊາຊົນໃນພື້ນທີ່.

**(ມະນີວອນ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ພາແຫ່ງຊາດ, ຮອງປະທານກຳມາທິການສະພາແຫ່ງຊາດ, ລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເຊິ່ງກອງປະຊຸມຄັ້ງນີ້ ໄດ້ຄົ້ນຄວ້າ ແລະ ພິຈາລະນາ ຮ່າງມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາແຫ່ງຊາດ; ຮ່າງມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຫ້ອງວ່າການສະພາແຫ່ງຊາດ ແລະ ບັນດາກຳມາທິການຕ່າງໆ: ກຳມາທິການກົດໝາຍ ແລະ ຍຸຕິທຳ, ກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ, ກຳມາທິການການຕ່າງປະເທດ, ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແລະ ກຳມາທິການເສດຖະກິດ ແລະ ການເງິນ. ພ້ອມກັນນີ້, ຍັງໄດ້ຄົ້ນຄວ້າພິຈາລະນາການແຕ່ງຕັ້ງບຸກຄະລາກອນຂອງສານປະຊາຊົນ ຈຳນວນ 18 ທ່ານ; ລາຍງານການກວດກາເນື້ອໃນຮອບດ້ານກົດໝາຍ 3 ສະບັບຄື: ຮ່າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການຈະລາຈອນທາງບົກ (ປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ (ປັບປຸງ); ລາຍງານຄວາມຄືບໜ້າການກະກຽມການພົບປະແລກປ່ຽນບົດຮຽນລະຫວ່າງຫ້ອງວ່າການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ຄັ້ງທີ XIII ທີ່ ສສ.ຫວຽດນາມ; ພິຈາລະນາກ່ຽວກັບການສະເໜີແຕ່ງຕັ້ງຮອງປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກົດໝາຍ ແລະ ຍຸຕິທຳ ຂອງສະພາປະຊາຊົນແຂວງຊຽງຂວາງ; ຄົ້ນຄວ້າພິຈາລະນາໜັງສືສະເໜີຂອງລັດຖະບານ ກ່ຽວກັບຜົນການເຈລະຈາຮ່າງສັນຍາເພື່ອຫຼີກເວັ້ນການເກັບອາກອນຊໍ້າຊ້ອນ ແລະ ສະກັດກັ້ນການຫຼົບຫຼີກການເສຍອາກອນລາຍໄດ້DTC ລະຫວ່າງ ສປປລາວ ກັບ ປະເທດຍີ່ປຸ່ນແລະປະເທດຟີລິບປິນ; ພິຈາລະນາກ່ຽວກັບໜັງສືສະເໜີຂອງລັດຖະບານ ກ່ຽວກັບການພິຈາລະນາຍົກເວັ້ນການເກັບອາກອນຊໍ້າຊ້ອນ ແລະ ສະກັດກັ້ນການຫຼົບຫຼີກການເສຍອາກອນລາຍໄດ້DTC ລະຫວ່າງ ສປປລາວ ກັບ ສະຫະລັດອາຣັບເອມິເຣດ (UAE); ພິຈາລະນາກ່ຽວກັບການສະເໜີຂອງສະພາປະຊາຊົນແຂວງໄຊຍະບູລີ ກ່ຽວກັບການສືບຕໍ່ໂຄງການກໍ່ສ້າງຕຶກສະພາປະຊາຊົນແຂວງໄຊຍະບູລີຫຼັງໃໝ່;ແລະບາງບັນຫາວຽກພາຍໃນຂອງສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

### ອາດ ກະວີລາວ

## ໄພທຳມະຊາດທີ່ຮ້າຍແຮງ ໃນບັນດາແຂວງໃນປີ 2026

**# ຂຽນໂດຍ: ນາງ ສຸນທອນ ໄຊຍະຈັກ**

❈ ພະຍາກອນອາກາດກ່າວໄວ້ — ພະຍຸຫຼາຍລູກໃຫຍ່ໃກ້ເຂົ້າມາ
ເລີ່ມແຕ່ຕົ້ນເດືອນສິງຫາ — ປະຊາຊົນເລີ່ມເດືອດຮ້ອນ
ພະຍຸລູກຕໍ່ລູກລຽນຊ້ອນ — ກະຈາຍໄປເກືອບທົ່ວທຸກແຂວງ
ແລວພະຍຸຝົນຮຸນແຮງ — ທົ່ວພາກກາງແລະໃຕ້

❈ ບໍລິຄຳໄຊກໍບໍ່ເວັ້ນ — ບຸກຮອດຄຳມ່ວນແລະສະຫວັນ
ສາລະວັນເຊກອງພ້ອມ — ອັດຕະປື ແລະຈຳປາສັກ
ອຸກອັ່ງເດເຂດທີ່ຫວງຮັກ — ຮົ້ວສວນໄຮ່ນາຕາກ້າ
ໝູໝາງົວຄວາຍແບ້ — ຖືກກະແສນໍ້າສຸທັ່ງ

❈ ຂົວທາງພັງທະລາຍ ບໍ່ໜ້ອຍ — ຕັດສະບັ້ນຫ່າງໄກກັນ
ໄຮ່ນານັບຫຼາຍໝື່ນເຮັກຕາ — ຈົມຢູ່ພື້ນບາດານ
ປຽບເໝືອນທະເລໄພສານ — ຕ້ອງຂີ່ເຮືອໄປຢ້ຽມ
ປະຊາຊົນກຽມພ້ອມ — ໃຊ້ແຮງງານຊ່ວຍກັນກ່ອນ

❈ ສະພາບການເຄັ່ງຮ້ອນ — ພວມກ້າວສູ່ແຂວງພາກເໜືອ
ຝົນຕົກຢ່າງຄຸມເຄືອ — ຫຼາຍວັນບໍ່ເວັ້ນຫ່າງ
ທາງກໍເລີ່ມເຊາະເຈື່ອນ — ຂາດສະບັ້ນຕາມມາ
ອຸດົມໄຊ ຫຼວງນໍ້າທາ — ຫຼວງພະບາງຖືກກະທົບຄັ້ງໃຫຍ່

❈ ລັດຖະບານໄດ້ສຸມໃສ່ — ຢ່າງກະທັນຫັນທັນການ
ສ້າງໃຫ້ມີຂະບວນການ — ໃຈອາສາຊ່ວຍພີ່ນ້ອງ
ຜູ້ມີໃຈສັດທາບໍ່ຂັດຂ້ອງ — ປະກອບສ່ວນໃຫ້ຫຼວງຫຼາຍ
ເປັນກ້ອນເງິນສຳຄັນ — ເຄື່ອງໃຊ້ບໍລິໂພກຕ່າງໆ

❈ ນີ້ລະຄືແບບຢ່າງ — ຂອງຄວາມສາມັກຄີ
ສ້າງເປັນພະລັງແຮງທີ່ດີ — ພ້ອມກັນຜ່ານອຸປະສັກ
ຄວາມຮັກແພງແບບນີ້ — ຫາໄດ້ທີ່ແຜ່ນດິນລາວ
ເມື່ອຄາວປວງຊົນລາວ — ມີຄວາມເດືອດຮ້ອນ

❈ ໜ້າສະອອນໃຈຜູກໝັ້ນ — ບໍ່ປະຫ່າງໄກຈາກກັນ
ທຸກສຸກເຮົາມີກັນແລະກັນ — ໂອບອ້ອມອາລີເອົາໄວ້
ເຫັນໄດ້ຄວາມຈິງໃຈແບບນີ້ — ນໍ້າຕາຍ່າວອອກທັນທີ
ຂໍໃຫ້ມີຄວາມຫ່ວງໄຍ — ປະຊາຊົນລາວທົ່ວໜ້າ

❈ ພັກເຮົາຢືນຢູ່ໜ້າ — ພ້ອມນຳພາແກ້ທຸກຢ່າງ
ປັບປຸງພື້ນຖານໂຄງລ່າງໄວ້ — ໃຫ້ປະຊາໄດ້ສະດວກເດີນ
ເລັ່ງປະເມີນຄວາມເສຍຫາຍ — ວາງແຜນການຟື້ນຟູໃຫ້ໄວ
ເພື່ອໃຫ້ປະຊາຊົນເຮົາໄດ້ — ກັບເຂົ້າສູ່ຊີວິດທີ່ປອດໄພ

❈ ຄວາມເສຍຫາຍຄັ້ງໃຫຍ່ນີ້ — ຍັງຕ້ອງການຜູ້ມີສັດທາ
ເພື່ອພ້ອມກັນຫ້າງຫາ — ກ້ອນທຶນເພື່ອພັດທະນາຕໍ່ໜ້າ
ຖ້າພວກເຮົາຂານອາສາ — ຮ່ວມແຮງຮ່ວມໃຈກັນເຂົ້າ
ປະເທດເຮົາຈະສາມາດຜ່ານ — ວິກິດການໃຫຍ່ນ້ອຍກໍຄຸ່ງໄປ ແທ້ໄດ!



## ພັກຫາຍ ລະບາຍ

### (ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)

**# ສຽມທ້ຽນ**

❈ **ສາ**ທາລະນະສຸກເພີ່ນກ່າວໄວ້ ໃຫ້ລະວັງ 17 ພະຍາດຮ້າຍ ພາຍຫຼັງນໍ້າບົກແຫ້ງ ລະວັງເດີ້ພົງພີ່ນ້ອງ ພະຍາດໂລຄາ ອາດຈະບໍ່ມາ ຕໍ່ຕື່ມຕາມຊ້ຳ ກິນຢູ່ບໍ່ໃຊ້ ອາໄສຢູ່ໃຫ້ສະອາດ ເພື່ອປາສະຈາກໂລກຮ້າຍ ອັນຕະລາຍເອັ້ນທ່າງໂຕ **ທ່ານເອີຍ!**

❈ **ກົມ**ອຸຕຸນິຍົມແລະອຸທົກກະສາດ ແຈ້ງເຕືອນໃຫ້ເຝົ້າລະວັງພາຍຸເຂດຮ້ອນ ທີ່ອາດຈະພັດເຂົ້າສູ່ປະເທດລາວ ໃນໄລຍະກາງເດືອນນີ້ ຂໍໃຫ້ມີສະຕິຕັ້ງ ຊອມຈອບຕິດຕາມ ສະພາບອາກາດລາຍວັນ ເພື່ອປ້ອງກັນໄພຮ້າຍ ອັນຕະລາຍຈາກຝົນ-ຟ້າ ພາຍຸໝູນອາດຖະຫຼົ່ມ ກຽມຮັບມືເພື່ອໄວ້ ພໍຊິໄດ້ຜ່ອນເບົາ **ພີ່ນ້ອງເອີຍ!**

## ຊອບຍິ້ມ

**# ພົ້ງລຶ້ງ**

### ເລື່ອງ: ຂອບໃຈທີ່ຍ້ອງ

ຊາຍໜຸ່ມຄົນໜຶ່ງອ່ານໜັງສືພິມ ແລ້ວເຫັນຂ່າວດາລາສາວທີ່ງົດງາມຄົນໜຶ່ງ ແຕ່ງງານກັບນັກກິລາທີ່ໂງ່ຄືຊ້ອນຊ້າງຕ່າຄົນໜຶ່ງ, ລາວຈຶ່ງປີ້ນໄປເວົ້າກັບຜູ້ເປັນເມຍວ່າ:

"ເປັນຫຍັງຜູ້ຊາຍໂງ່ໆ ຈຶ່ງມັກໄດ້ເມຍງາມເນາະ"

ຜູ້ເປັນເມຍຕອບດ້ວຍໜ້າຕາລຽບເສີຍ ໄຮ້ຄວາມຮູ້ສຶກ:

"ບໍ່ວ່າຈະດ້ວຍເຫດຜົນຫຍັງກະຕາມເທາະ ແຕ່ຈັ່ງໃດກະຂອບໃຈທີ່ຍ້ອງ" !!!



### ສຸພາສິດ-ຄະຕິເຕືອນໃຈ

**# ດອກຫຍ້າ**

"ຍາມເມື່ອຊາຕາຊົ້ນ — ຂອບຍຸງຍາງກໍໄດ້ໄຕ່
ບາດວ່າພະລາດລົ້ມ — ຫຍຸມຫຍ້າກໍບໍ່ທັບ"

# ອິນໂດ ຈະປັບປຸງກົດໝາຍ "ຖືສອງສັນຊາດ" ເພື່ອດຶງຄົນເກັ່ງ ກັບມາພັດທະນາປະເທດ




(REUTERS) - ຜູ້ນຳອິນໂດເນເຊຍ ປະກາດກຽມສະເໜີປັບປຸງກົດໝາຍສັນຊາດ, ເປີດທາງບຸກຄະລາກອນທີ່ມີຄວາມສາມາດບາງກຸ່ມຖືສອງສັນຊາດໄດ້ ເພື່ອດຶງຄົນເກັ່ງຈາກຕ່າງແດນມາຊ່ວຍພັດທະນາປະເທດ, ທ່າມກາງຄວາມກັງວົນເລື່ອງພາວະສະໝອງໄຫຼທີ່ເພີ່ມຂຶ້ນ.

ວັນທີ 14 ສິງຫາ 2026, ປະທານາທິບໍດີ ປຣາໂບໂວຊູບຽນໂຕກ່າວໃນຕອນໜຶ່ງລະຫວ່າງການຖະແຫຼງນະໂຍບາຍ ແລະ ງົບປະມານປະຈຳປີຕໍ່ລັດຖະສະພາວ່າລັດຖະບານຈະສະເໜີຮ່າງປັບປຸງຕໍ່ລັດຖະສະພາ ເພື່ອເປີດໂອກາດໃຫ້ຊາວອິນໂດເນເຊຍທີ່ອາໄສຢູ່ຕ່າງປະເທດ(diaspora) ຫຼາຍລ້ານຄົນ ເຂົ້າມາມີສ່ວນຮ່ວມໃນການພັດທະນາປະເທດຊາດ.

ລັດຖະບານຈະສະເໜີໃຫ້ອະນຸຍາດການຖືສອງສັນຊາດສຳລັບບຸກຄະລາກອນທີ່ມີຄວາມສາມາດໃນຂົງເຂດທີ່ອິນໂດເນເຊຍຕ້ອງການເຊັ່ນ: ໝໍ, ຜູ້ຊ່ຽວຊານດ້ານປັນຍາປະດິດ (ເອໄອ), ສິລະປິນ ແລະ ນັກເຕະບານ; ຢ່າງໃດກໍຕາມ, ການອະນຸຍາດໃຫ້ຖືສອງສັນຊາດຈະມີຂອບເຂດຈຳກັດ ແລະ ຕ້ອງຄຳນຶງເຖິງຜົນປະໂຫຍດຂອງຊາດເປັນສິ່ງສຳຄັນ.

ປັດຈຸບັນ, ກົດໝາຍຂອງອິນໂດເນເຊຍບໍ່ອະນຸຍາດໃຫ້ພົນລະເມືອງໄວຜູ້ໃຫຍ່ຖືສອງສັນຊາດ, ຂະນະທີ່ຜູ້ເຍົາເຊິ່ງຖືສອງສັນຊາດ ຕ້ອງເລືອກສັນຊາດດຽວເມື່ອອາຍຸຄົບ 18 ປີ.

ຜູ້ນຳອິນໂດເນເຊຍເຫັນວ່າ ບໍ່ຄວນບັງຄັບໃຫ້ບຸກຄະລາກອນທີ່ມີຄວາມສາມາດສູງ ຕ້ອງເລືອກລະຫວ່າງໂອກາດໃນການສ້າງຜົນງານຢູ່ຕ່າງປະເທດ ກັບຄວາມຜູກພັນຕໍ່ບ້ານເກີດເມືອງນອນຂອງຕົນ.

ປີຜ່ານມາ, ອິນໂດເນເຊຍເປີດໃຫ້ພົນລະເມືອງອິນໂດເນເຊຍທີ່ເຄີຍຖືສັນຊາດແຕ່ສະຫຼະສັນຊາດແລ້ວ ຍື່ນຂໍໃບອະນຸຍາດພັກເຊົາ ແລະ ເຮັດວຽກໃນປະເທດໄດ້ໂດຍບໍ່ຈຳກັດໄລຍະເວລາ ເພື່ອເປັນທາງເລືອກແທນການຖືສອງສັນຊາດ.

ທັງນີ້, ກະແສຮຽກຮ້ອງໃຫ້ເປີດທາງຖືສອງສັນຊາດເປັນປະເດັນທີ່ມີການຮຽກຮ້ອງຫຼາຍຂຶ້ນໃນອິນໂດເນເຊຍທ່າມກາງຄວາມກັງວົນເລື່ອງ "ພາວະສະໝອງໄຫຼ" (brain drain) ຈາກຊາວອິນໂດເນເຊຍທີ່ເດີນທາງໄປສຶກສາ ແລະ ເຮັດວຽກຢູ່ຕ່າງປະເທດ.

ຂໍ້ມູນຈາກສຳນັກງານກວດຄົນເຂົ້າເມືອງລະບຸວ່າ ມີຊາວອິນໂດເນເຊຍເກືອບ 4,000 ຄົນ ໄດ້ຮັບສັນຊາດສິງກະໂປ ລະຫວ່າງປີ 2019-2022; ປັດຈຸບັນ, ອິນໂດເນເຊຍມີປະຊາກອນປະມານ 290 ລ້ານຄົນ ແລະ ເປັນປະເທດທີ່ມີປະຊາກອນຫຼາຍເປັນອັນດັບ 4 ຂອງໂລກ.

# ລັດຖະສະພາອາຟຣິກາໃຕ້ ຈັດກອງປະຊຸມສຸດຍອດ ເພື່ອແກ້ໄຂບັນຫາຄວາມຮຸນແຮງຈາກກຸ່ມແກ๊ງ




(Xinhua) - ວັນພຸດທີ 19 ສິງຫາ 2026, ລັດຖະສະພາອາຟຣິກາໃຕ້ ໄດ້ຈັດກອງປະຊຸມສຸດຍອດ ເພື່ອຊອກຫາວິທີແກ້ໄຂ ເຊິ່ງເປັນສ່ວນໜຶ່ງຂອງການສືບສວນບັນຫາອາຊະຍາກຳຄວາມຮຸນແຮງທີ່ກ່ຽວຂ້ອງກັບກຸ່ມແກ๊ງທີ່ເກີດຂຶ້ນຢ່າງຕໍ່ເນື່ອງ; ກອງປະຊຸມສຸດຍອດຄັ້ງນີ້ ໄດ້ລວບລວມນັກເຄື່ອນໄຫວຕໍ່ຕ້ານອາຊະຍາກຳ, ອົງການສິດທິເດັກ ແລະ ສິດທິມະນຸດ, ຕົວແທນຕຳຫຼວດ ແລະ ຜູ້ມີສ່ວນຮ່ວມອື່ນໆ ມາຮ່ວມກັນເພື່ອໃຫ້ຂໍ້ມູນໂດຍກົງແກ່ກຳມາທິການວຽກງານຕຳຫຼວດຂອງສະພາແຫ່ງຊາດ ກ່ຽວກັບຜົນກະທົບທີ່ຮຸນແຮງຈາກກຸ່ມແກ๊ງມີຕໍ່ຄອບຄົວ ແລະ ຊຸມຊົນ, ພ້ອມທັງຂໍ້ກ່າວຫາວ່າຕຳຫຼວດບໍ່ສາມາດຄວບຄຸມຄວາມຮຸນແຮງໄດ້.

ໃນຖະແຫຼງການທີ່ລັດຖະສະພາເຜີຍແຜ່ເມື່ອວັນອັງຄານ, ກຳມາທິການວຽກງານຕຳຫຼວດ ໄດ້ຮັບມອບໝາຍໃຫ້ດຳເນີນການສືບສວນໂດຍສະພາແຫ່ງຊາດ ເມື່ອວັນທີ 25 ພະຈິກ 2025; ກຳມາທິການກ່າວວ່າ ການດຳເນີນການຄັ້ງນີ້ເກີດຂຶ້ນຈາກຈຳນວນຄະດີຄາດຕະກຳຮຸນແຮງ ແລະ ອາຊະຍາກຳທີ່ກ່ຽວຂ້ອງກັບກຸ່ມແກ๊ງ ເພີ່ມຂຶ້ນຢ່າງຫຼວງຫຼາຍ ໃນເຂດ Cape Flats ເມືອງ Cape Town ແຂວງ Western Cape, ແລະຄວາມຈຳເປັນໃນການສືບສວນສາເຫດຕົ້ນຕໍ ແລະ ປະສິດທິພາບຂອງການແຊກແຊງຂອງຕຳຫຼວດ.

ຕົ້ນປີນີ້, ທະຫານປະມານ 2,200 ຄົນ ຈາກກອງກຳລັງປ້ອງກັນປະເທດອາຟຣິກາໃຕ້ ຖືກສົ່ງໄປປະຈຳການຢູ່ Western Cape ແລະ ອີກ 4 ແຂວງ ເພື່ອສະໜັບສະໜູນການປະຕິບັດງານຂອງຕຳຫຼວດໃນການປາບປາມຄວາມຮຸນແຮງຈາກກຸ່ມແກ๊ງ; ເຖິງຢ່າງໃດກໍຕາມ, ເຫດການຍິງກັນຫຼາຍຄັ້ງໃນ 3 ຊຸມຊົນໃນເມືອງ Cape Town ໄລຍະທ້າຍອາທິດດຽວເມື່ອຕົ້ນເດືອນນີ້ ເຮັດໃຫ້ມີຜູ້ເສຍຊີວິດ 11 ຄົນເຊິ່ງເນັ້ນໃຫ້ເຫັນເຖິງໄພຂົ່ມຂູ່ທີ່ຍັງຄົງມີຢູ່ຈາກຄວາມຮຸນແຮງຂອງກຸ່ມແກ๊ງໃນພື້ນທີ່.

ລະຫວ່າງກອງປະຊຸມສຸດຍອດ, ກຳມາທິການໄດ້ຮັບຟັງຂໍ້ມູນກ່ຽວກັບສະມາຊິກແກ๊ງມີອາຍຸນ້ອຍລົງ ເນື່ອງຈາກກຸ່ມແກ๊ງຕ່າງໆ ລໍ້ລວງ ແລະ ເກນເດັກ, ແລະການທາລຸນຜູ້ອາຍຸສູງເປັນເລື່ອງທີ່ພົບເຫັນທົ່ວໄປໃນຊຸມຊົນ; ກຳມາທິການຍັງໄດ້ຮັບຟັງຂໍ້ກ່າວຫາກ່ຽວກັບການມີສ່ວນຮ່ວມຂອງຕຳຫຼວດໃນອາຊະຍາກຳຕ່າງໆລວມທັງການຂູດຮີດ, ການຮັບສິນບົນ ແລະ ການສົມຮູ້ຮ່ວມຄິດກັບສະມາຊິກແກ๊ງ ຕະຫຼອດເຖິງຂໍ້ກ່າວອ້າງທີ່ວ່າຜູ້ເຄາະຮ້າຍ ແລະ ສະມາຊິກໃນຄອບຄົວມັກຖືກປະຕິເສດເມື່ອລາຍງານອາຊະຍາກຳ(ແຈ້ງຄວາມ).

ອຽນ ຄາເມຣອນ (Ian Cameron) ປະທານກຳມາທິການ ກ່າວວ່າ: ກອງປະຊຸມສຸດຍອດຄັ້ງນີ້ເປັນສ່ວນໜຶ່ງຂອງຂະບວນການທີ່ກວ້າງຂຶ້ນ ເຊິ່ງຈະລວມເຖິງການໄປຢ້ຽມຢາມສະຖານທີ່ຕ່າງໆ ແລະ ຂັ້ນຕອນຕໍ່ໄປອື່ນໆອີກດ້ວຍ, "ນີ້ຈະເປັນຂະບວນການວາງຮາກຖານສຳລັບການສືບສວນເລື່ອງຄວາມຮຸນແຮງທີ່ກ່ຽວຂ້ອງກັບກຸ່ມແກ๊ງທີ່ກວ້າງຂຶ້ນ" ຄາເມຣອນ ກ່າວ, "ແນ່ນອນວ່າມັນຈະດຳເນີນຕໍ່ໄປຈົນຮອດປີ 2027 ມັນບໍ່ແມ່ນສິ່ງທີ່ພວກເຮົາຈະຟ້າວຟັ່ງ".

# ສະພາອີຣານ ຜ່ານຮ່າງກົດໝາຍ ເພື່ອຈຳກັດອິດທິພົນຈາກຕ່າງປະເທດ



(Reuters) - ວັນອາທິດທີ 16 ສິງຫາ 2026, ລັດຖະສະພາອີຣານ ໄດ້ອະນຸມັດຫຼັກການທົ່ວໄປຂອງຮ່າງກົດໝາຍສະບັບໃໝ່ ທີ່ຈະກຳນົດໃຫ້ການສຳພາດ ແລະ ການຕິດຕໍ່ສື່ສານອື່ນໆ ກັບສື່ມວນຊົນທີ່ຖືວ່າເປັນສັດຕູຕໍ່ປະເທດ, ລວມທັງສື່ມວນຊົນຂອງສະຫະລັດ ແລະ ອິດສະຣາເອນ, ແລະ ສື່ມວນຊົນທີ່ໄດ້ຮັບທຶນຈາກທັງສອງປະເທດ ເປັນຄວາມຜິດທາງອາຍາ.

ອອສມານ ຊາລາຣີ (Osman Salari) ກຳມະການກຳມາທິການຕຸລາການ ແລະ ກົດໝາຍຂອງລັດຖະສະພາອີຣານ ກ່າວວ່າ ບົດບັນຍັດແຕ່ລະຂໍ້ຂອງຮ່າງກົດໝາຍສະບັບນີ້ ເຊິ່ງມີຈຸດປະສົງເພື່ອຕໍ່ຕ້ານອິດທິພົນຂອງອົງການສືບລັບຕ່າງປະເທດ ຍັງບໍ່ທັນໄດ້ຮັບການອະພິປາຍ ແລະ ອະນຸມັດ, ແລະ ບົດລາຍງານກ່ຽວກັບລາຍລະອຽດຂອງຮ່າງກົດໝາຍ ຍັງບໍ່ຖືເປັນທີ່ສິ້ນສຸດ.

ພາຍໃຕ້ຮ່າງກົດໝາຍທີ່ສະເໜີ, ການໃຫ້ສຳພາດ ຫຼື ການເຂົ້າຮ່ວມການສົນທະນາກັບສື່ມວນຊົນດັ່ງກ່າວ ຈະຖືກຫ້າມ, ຜູ້ລະເມີດຈະຖືກຕັດສິນຈຳຄຸກຕັ້ງແຕ່ຫົກເດືອນຫາສອງປີ. ນອກຈາກນີ້, ການໃຫ້ສຳພາດກັບສື່ມວນຊົນຕ່າງປະເທດອື່ນໆ ຈະຕ້ອງແຈ້ງໃຫ້ກະຊວງສືບລັບອີຣານຊາບ; ສ່ວນການຕິດຕໍ່ກັບສະຖານທູດຕ່າງປະເທດ, ສຳນັກງານຂອງອົງການຕ່າງປະເທດ ຫຼື ສະຖາບັນອື່ນທີ່ບໍ່ແມ່ນຂອງອີຣານ ໂດຍບໍ່ມີການແຈ້ງໃຫ້ຊາບແລະ ໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກກະຊວງການຕ່າງປະເທດອີຣານ ຈະມີໂທດປັບໃໝ ແລະ ຖືກຕັດສິດທາງສັງຄົມບາງຢ່າງ.

ຮ່າງກົດໝາຍທີ່ສະເໜີ ຈະເພີ່ມການລົງໂທດສຳລັບອາຊະຍາກຳທາງເສດຖະກິດ ທີ່ກະທຳພາຍໃຕ້ການຊີ້ນຳຫຼືການຄວບຄຸມຂອງຄົນຕ່າງປະເທດ, ຫ້າມການສະໜອງຂໍ້ມູນໃຫ້ແກ່ຄົນຕ່າງປະເທດໂດຍບໍ່ໄດ້ຮັບການອະນຸມັດຈາກກະຊວງສືບລັບຂອງອີຣານ ແລະ ຈຳກັດການຮ່ວມມືທາງວິທະຍາສາດກັບສະຖາບັນຕ່າງປະເທດ ນອກເໜືອຈາກລາຍຊື່ທີ່ໄດ້ຮັບອະນຸມັດ; ຍິ່ງໄປກວ່ານັ້ນ, ຈະລົງໂທດນະໂຍບາຍ ຫຼື ຂໍ້ສະເໜີທາງກົດໝາຍທີ່ສ້າງຂຶ້ນພາຍໃຕ້ການຊີ້ນຳຂອງອົງການສືບລັບຕ່າງປະເທດ ຫາກນະໂຍບາຍ ແລະ ຂໍ້ສະເໜີເຫຼົ່ານັ້ນ ເປັນອັນຕະລາຍຕໍ່ຄວາມໝັ້ນຄົງ ຫຼື ເອກະລາດຂອງອີຣານ, ໂດຍມີໂທດຈຳຄຸກສູງສຸດ 30 ປີ.




## ປະກາດກົງຈັກ...

(ຕໍ່ຈາກໜ້າ 1)

(ສພຊ)-ທ່ານກອງແກ້ວ ໄຊສົງຄາມ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ໄດ້ໄປປະກາດກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ແລະ ການແຕ່ງຕັ້ງບຸກຄະລາກອນປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ແລະ ເຂດເລືອກຕັ້ງທີ 16 ແຂວງເຊກອງ ໃນວັນທີ 31 ສິງຫາ - 1 ກັນຍາ 2026 ທີ່ 2 ແຂວງດັ່ງກ່າວ; ເຂົ້າຮ່ວມມີບັນດາທ່ານເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ); ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ຄະນະປະຈຳ ແລະ ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ); ພະແນກການອ້ອມຂ້າງ, ຄະນະຫ້ອງວ່າການ ແລະ ພະນັກງານ ສພຂ 2 ແຂວງ.

ໃນພິທີ, ໄດ້ຮັບຟັງລາຍງານໂດຍຫຍໍ້ສະພາບລວມ ແລະ ການຈັດຕັ້ງປະຕິບັດພາລະບົດບາດຂອງສະພາປະຊາຊົນແຂວງ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2026. ທ່ານເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ຂຶ້ນຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 193/ຄປຈ, ລົງວັນທີ 8 ກໍລະກົດ 2026 ວ່າດ້ວຍການແຕ່ງຕັ້ງທ່ານດາວວົງ ພອນແກ້ວ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ແລະ ທ່ານ ຈັນສະໝອນ ພົມມະແສງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ; ສະບັບເລກທີ 195/ຄປຈ, ລົງວັນທີ 8 ກໍລະກົດ 2026 ວ່າດ້ວຍການແຕ່ງຕັ້ງທ່ານ ບຸນຫຼາຍ ບຸດທີ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ແລະ ທ່ານ ຕຸລາວັນ ວົງໄຊ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ. ຈາກນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ມອບມະຕິດັ່ງກ່າວໃຫ້ແກ່ບັນດາທ່ານທີ່ໄດ້ຮັບແຕ່ງຕັ້ງ.

ທ່ານ ກອງແກ້ວ ໄຊສົງຄາມ ໄດ້ຕີລາຄາສູງຕໍ່ຄວາມບາກບັ່ນບຸກບືນ, ຄວາມພະຍາຍາມສູ້ຊົນຂອງຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງທຸກຂັ້ນ ໃນການນຳພາ-ຊີ້ນຳການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ໄດ້ຖືກແຕ່ງຕັ້ງ ເພື່ອນຳພາ-ຊີ້ນຳວຽກງານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ພ້ອມທັງເນັ້ນໜັກໃຫ້ມີການວາງແຜນການເຄື່ອນໄຫວເປັນແຕ່ລະໄລຍະ; ມີການສະຫຼຸບຕີລາຄາລາຍງານຂັ້ນເທິງ ໂດຍອີງໃສ່ແຜນການເຄື່ອນໄຫວຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ກໍຄືຄະນະພັກແຂວງ ວາງອອກ ທັງປະສານສົມທົບກັບ ຄປຈສພຂ ກໍຄືອຳນາດການປົກຄອງແຂວງ ເພື່ອຄົ້ນຄວ້າຈັດຕັ້ງຜັນຂະຫຍາຍ 5 ແຜນງານ, 25 ໂຄງການທີ່ ສພຊ ວາງອອກ ໃຫ້ສອດຄ່ອງກັບຈຸດພິເສດ, ຄວາມເປັນຈິງ ແລະ ທ່າແຮງ ໃນເຂດເລືອກຕັ້ງຂອງຕົນ; ມີກົນໄກການປະສານງານກັບບັນດາກຳມາທິການ ແລະ ຫ້ອງວ່າການສະພາແຫ່ງຊາດ, ສະພາປະຊາຊົນແຂວງ ໃນການປະຕິບັດສິດ ແລະ ໜ້າທີ່ຂອງ ສພຊ ແລະ ຄປຈສພຊ; ອຳນາດການປົກຄອງແຂວງ ກໍຄືອຳນາດການປົກຄອງທຸກຂັ້ນ ຈົ່ງໃຫ້ການຮ່ວມມື, ສະໜັບສະໜູນ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງສສຊ-ສສຂເພື່ອເຮັດສຳເລັດໜ້າທີ່ການເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນເຂດເລືອກຕັ້ງຂອງຕົນ.

ຈາກນັ້ນ, ທ່ານປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທັງສອງແຂວງ ຕາງໜ້າຄະນະ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ແລະ ຈະນຳເອົາທິດຊີ້ນຳອັນລ້ຳຄ່າດັ່ງກ່າວ ໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ ພ້ອມທັງຈະອຸທິດເຫື່ອແຮງ, ສະຕິປັນຍາ ແລະ ຄວາມຮູ້ຄວາມສາມາດຂອງຕົນເຂົ້າໃນການປະຕິບັດໜ້າທີ່ການເມືອງທີ່ພັກ, ລັດ ແລະ ປະຊາຊົນມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ.

ໃນໂອກາດເຄື່ອນໄຫວວຽກງານຄັ້ງນີ້, ທ່ານ ກອງແກ້ວ ໄຊສົງຄາມ ກຳມະການສູນກາງພັກ, ຮອງປະທານ ຄປຈສພຊ ໄດ້ນຳເຄື່ອງຊ່ວຍເຫຼືອປະເພດເຄື່ອງໃຊ້ປະຈຳວັນ, ເຄື່ອງສຸຂະອະນາໄມ, ເຄື່ອງໃຊ້ຄົວເຮືອນ ລວມທັງໝົດ 300 ແກັດ ມູນຄ່າທັງໝົດ 94.5 ລ້ານກີບ ແລະ ເງິນສົດ 200 ລ້ານກີບ ມອບໃຫ້ສະພາປະຊາຊົນສອງແຂວງດັ່ງກ່າວ.




***#ບ່າວກະບື***

**ສາມ**ປີຫຼັງຈາກບາງເມຍເສຍຊີວິດ, ຝ່າຍຊາຍທີ່ເປັນຜົວກໍ່ອອກປະກາດທາງໜັງສືພິມດ້ວຍຂໍ້ຄວາມວ່າ: "ຕ້ອງການເມຍ". ພາຍໃນໜຶ່ງເດືອນ, ເຂົາໄດ້ຮັບຄຳຕອບເປັນຮ້ອຍໆ, ທັງໝົດມາຈາກຜູ້ຊາຍໂດຍມີຂໍ້ຄວາມວ່າ: "ເອົາເມຍເຮົາກໍ່ໄດ້"

***# BAOKBU***

Three years after the death of his wife, the man advertised in a newspaper, "Wanted Wife". In the course of one month, he received hundreds lf replies, all from men saying "you can have mine"



## ກວດກາເນື້ອໃນ...

(ຕໍ່ຈາກໜ້າ 1)

2026 ທີ່ຫໍສະພາແຫ່ງຊາດ ໂດຍການເປັນປະທານຮ່ວມ ແລະ ກ່າວເປີດຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ (ກໝຍທ), ທ່ານ ພົທ. ວົງສອນ ອິນປານພົມ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ ແລະ ທ່ານ ພົຈວ. ສຸລິໄຊ ພົຈິດ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊິ່ງມີບັນດາຮອງປະທານກຳມາທິການສະພາແຫ່ງຊາດ, ຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ກຳມະການປະຈຳ ກໝຍທ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນຈາກພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການກ່າວເປີດ, ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ເນັ້ນໜັກເຖິງຄວາມໝາຍຄວາມສຳຄັນຂອງກອງປະຊຸມ ເນື່ອງຈາກວ່າຮ່າງກົດໝາຍສະບັບນີ້ ປະເມີນຜົນການຈັດຕັ້ງປະຕິບັດມາແລ້ວ ຍັງມີບາງບັນຫາພົບຄວາມຫຍຸ້ງຍາກທີ່ຈະຕ້ອງໄດ້ຮັບການແກ້ໄຂ, ການປັບປຸງເທື່ອນີ້ເພື່ອແກ້ໄຂບັນຫາ ເປັນຕົ້ນ: ການຄຸ້ມຄອງວຽກງານທະຫານໂດຍສະເພາະແມ່ນການປັບປຸງກໍ່ສ້າງກົມກອງເຫຼົ່າຮົບ; ການປະຕິບັດນະໂຍບາຍໃຫ້ນາຍທະຫານແຕ່ລະຂັ້ນ ເປັນຕົ້ນ ການປະດັບຊັ້ນ, ການເລື່ອນຊັ້ນ, ການທຽບຊັ້ນ; ການປະຕິບັດນະໂຍບາຍຕໍ່ຄອບຄົວນາຍທະຫານຜູ້ເສຍສະຫຼະຊີວິດ, ຜູ້ເສຍອົງຄະ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານບຳນານແລະຄອບຄົວນາຍທະຫານຜູ້ປະຕິບັດໜ້າທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ເຂດທຸລະກັນດານ ໃຫ້ໄດ້ຮັບການເບິ່ງແຍງດູແລຢ່າງເໝາະສົມ ແລະ ທົ່ວເຖິງ ໃຫ້ສົມຄູ່ກັບສະພາບການເຕີບໃຫຍ່ຂະຫຍາຍຕົວຂອງກອງທັບປະຊາຊົນລາວ. ສະນັ້ນ, ກອງປະຊຸມຄັ້ງນີ້ຈະໄດ້ຄົ້ນຄວ້າຢ່າງລະອຽດ, ຮອບດ້ານ ເພື່ອເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍ ມີຄວາມຄົບຖ້ວນ, ຮັດກຸມ.

ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າປະກອບຄຳເຫັນຕໍ່ເນື້ອໃນຮ່າງກົດໝາຍທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການຕົນ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດ.

ພາຍຫຼັງສຳເລັດກອງປະຊຸມຄັ້ງນີ້, ກຳມາທິການກົດໝາຍ ແລະ ຍຸຕິທຳ ຈະໄດ້ລາຍງານຜົນສຳເລັດການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ ຕໍ່ກອງປະຊຸມ ຄປຈສພຊ ປະຈຳເດືອນກັນຍາ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ທີ່ຈະຈັດຂຶ້ນໃນທ້າຍປີນີ້.

**(ບຸນຊູ ດາລາແສນ)**

**ຜູ້ຊີ້ນຳ**
ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ
**ຄະນະບັນນາທິການ**
ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ
**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ
**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ